ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 141/ຫກ

ນະຄອນຫຼວງວຽງຈັນ, ວັນທີ 25 ມີນາ 2022

# ແຈ້ງການ

**ເຖິງ:** - ບັນດາກົມ-ທຽບເທົ່າກົມ, ສາຂາ ທຫລ ປະຈໍາພາກ;
- ທະນາຄານທຸລະກິດລັດ, ທະນາຄານລັດຮຸ້ນສ່ວນ, ທະນາຄານຕ່າງປະເທດ ແລະ ສາຂາທະນາຄານຕ່າງປະເທດ.

**ເລື່ອງ:** ແຈ້ງວັນພັກຊົດເຊີຍປີໃໝ່ລາວ ພສ. 2565.

- ອີງຕາມ ແຈ້ງການຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 367/ຫສນຍ, ລົງວັນທີ 23 ມີນາ 2022;
- ອີງຕາມ ແຈ້ງການວັນພັກລັດຖະການທະນາຄານແຫ່ງ ສປປ ລາວ ສະບັບເລກທີ 229/ທຫ, ລົງວັນທີ 9 ທັນວາ 2021.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບກ່ຽວກັບການປັບປຸງແປງວັນພັກລັດຖະການຂອງທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນວັນພັກຊົດເຊີຍປີໃໝ່ລາວ ປະຈໍາປີ ພສ. 2565 ເຊິ່ງໃນເບື້ອງຕົ້ນໄດ້ກໍານົດເອົາ ວັນທີ 18 ເມສາ 2022 ເປັນວັນພັກຊົດເຊີຍ, ແຕ່ເພື່ອໃຫ້ສອດຄ່ອງ ແລະ ໄປໃນທິດທາງດຽວກັບເນື້ອໃນຈິດໃຈຂອງແຈ້ງການຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ. ທະນາຄານແຫ່ງ ສປປ ລາວ ຈຶ່ງໄດ້ປັບປຸງວັນພັກຊົດເຊີຍມາເປັນ **ວັນທີ 13 ເມສາ 2022** ເປັນມື້ພັກຊົດເຊີຍ ແລະ ໃຫ້ມາປະຕິບັດວຽກງານປົກກະຕິນັບແຕ່ວັນທີ 18 ເມສາ 2022 ເປັນຕົ້ນໄປ. ພ້ອມດຽວກັນນັ້ນ, ໄລຍະການສະເຫຼີມສະຫຼອງປີໃໝ່ລາວ ພສ. 2565 ຫ້າມບໍ່ໃຫ້ຈັດງານລ້ຽງປີໃໝ່ ແລະ ງານອວຍພອນກັນ ຢ່າງເດັດຂາດ ເພື່ອປະຕິບັດມາດຕະການສະກັດກັ້ນ, ປ້ອງກັນການແຜ່ລະບາດຂອງພະຍາດ Covid-19.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດດ້ວຍ.

**ເຊັນແທນຫົວໜ້າຫ້ອງການ**
**ຮອງຫົວໜ້າຫ້ອງການ**

ຫ້ອງການ ທະນາຄານແຫ່ງ ສປປ ລາວ

ຈິດຕະກອນ ຈິດຕະພົງ

ໝາຍເຫດ:
ຖ້າມີການປັບປຸງແປງ ຈະແຈ້ງໃຫ້ຊາບຕື່ມຕາມພາຍຫຼັງ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la